ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ: 1639----/ກງ

ນະຄອນຫຼວງວຽງຈັນ, ວັນທີ: 31 MAY 2016

# ຄໍາແນະນໍາ
# ຂອງຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ
# ວ່າດ້ວຍ ການສະເໜີຄືນ ແລະ ການແກ້ໄຂຄໍາສະເໜີຄືນ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດໍາລັດນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກໍລະກົດ 2007 ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ການຄົ້ນຄວ້ານໍາສະເໜີຂອງກົມພາສີ ສະບັບເລກທີ 05119/ກພສ, ລົງວັນທີ 11 ເມສາ 2016.

## ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ອອກຄໍາແນະນໍາ :

### ມາດຕາ 1 : ຈຸດປະສົງ

ຄໍາແນະນໍາສະບັບນີ້ ກໍານົດ ຫຼັກການ, ລະບຽບການ, ກົນໄກ, ຂັ້ນຕອນ ແລະ ວິທີການ ດໍາເນີນວຽກງານກ່ຽວກັບການສະເໜີຄືນຂອງຜູ້ແຈ້ງພາສີ ແລະ ການແກ້ໄຂຄໍາສະເໜີຄືນ ເພື່ອຮັບປະກັນ ສິດ, ຄວາມຍຸຕິທໍາ, ຜົນປະໂຫຍດຂອງລັດ ແລະ ຂອງຜູ້ແຈ້ງພາສີ ໃນການຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງກັບການແກ້ໄຂຄໍາສະເໜີຄືນ ໃຫ້ມີປະສິດທິຜົນ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບລະບຽບການສາກົນທີ່ ສປປ ລາວ ໄດ້ເຂົ້າຮ່ວມເປັນພາຄີ.

### ມາດຕາ 2 : ການອະທິບາຍຄໍາສັບ

1. **ການສະເໜີຄືນ ໝາຍເຖິງ** ການເຮັດໃບສະເໜີຢ່າງເປັນລາຍລັກອັກສອນ ຂອງຜູ້ແຈ້ງພາສີ ທີ່ບໍ່ພໍໃຈຕໍ່ຄໍາຕົກລົງຂອງລັດຖະການພາສີ ກ່ຽວກັບມູນຄ່າແຈ້ງພາສີ, ເລກລະຫັດ ແລະ ແຫຼ່ງກໍາເນີດ ສິນຄ້າ, ເຄື່ອງຂອງ ພ້ອມດ້ວຍເອກະສານ, ຂໍ້ມູນຫຼັກຖານອ້າງອີງທີ່ກ່ຽວຂ້ອງ ຍື່ນຕໍ່ຄະນະກໍາມະການແກ້ໄຂຄໍາສະເໜີໃນແຕ່ລະຂັ້ນ;
2. **ຄະນະກໍາມະການແກ້ໄຂຄໍາສະເໜີ ໝາຍເຖິງ** ຄະນະກໍາມະການທີ່ຖືກແຕ່ງຕັ້ງຂຶ້ນ ໂດຍລັດຖະມົນຕີກະຊວງການເງິນ ຊຶ່ງມີສອງຂັ້ນ ຄື : ຄະນະກໍາມະການແກ້ໄຂຄໍາສະເໜີ ປະຈໍາດ່ານພາສີສາກົນ ແລະ ຄະນະກໍາມະການແກ້ໄຂຄໍາສະເໜີຂັ້ນສູນກາງ;
3. **ການແກ້ໄຂຄໍາສະເໜີຄືນ ໝາຍເຖິງ** ການຄົ້ນຄວ້າ ພິຈາລະນາຄໍາສະເໜີ ແລະ ເອກະສານ, ຂໍ້ມູນຫຼັກຖານອ້າງອີງກ່ຽວຂ້ອງ ທີ່ຜູ້ແຈ້ງພາສີສະໜອງໃຫ້ຄະນະກໍາມະການແກ້ໄຂຄໍາສະເໜີແຕ່ລະຂັ້ນ ເພື່ອອອກຄໍາຕົກລົງໃຫ້ຜູ້ສະເໜີຄືນ ຕາມຂັ້ນຕອນ ທີ່ກົດໝາຍ ແລະ ລະບຽບການກໍານົດ;

4. **ຄໍາຕັດສິນ ໝາຍເຖິງ** ການແກ້ໄຂຄໍາສະເໜີຄືນທີ່ເປັນການຕັດສິນດ້ວຍສຽງສ່ວນຫຼາຍ ຂອງຄະນະກໍາມະການແກ້ໄຂຄໍາສະເໜີແຕ່ລະຂັ້ນ ບົນພື້ນຖານເອກະສານ ແລະ ຂໍ້ມູນຫຼັກຖານອ້າງອີງທີ່ກ່ຽວຂ້ອງ ແລະ ແຈ້ງຄໍາຕັດສິນ ຢ່າງເປັນລາຍລັກອັກສອນ ສົ່ງໃຫ້ຜູ້ສະເໜີຄືນ ຕາມກົດໝາຍ ແລະ ລະບຽບການກໍານົດ;
5. **ຜູ້ຊ່ຽວຊານດ້ານພາສີ ໝາຍເຖິງ** ບຸກຄະລາກອນຂອງລັດຖະການພາສີ ຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ຊໍານານງານສະເພາະດ້ານ ມູນຄ່າແຈ້ງ, ເລກລະຫັດ ແລະ ແຫຼ່ງກໍາເນີດ ສິນຄ້າ, ເຄື່ອງຂອງ ທີ່ໄດ້ຮັບການແຕ່ງຕັ້ງເຂົ້າເປັນຄະນະກໍາມະການແກ້ໄຂຄໍາສະເໜີແຕ່ລະຂັ້ນ;
6. **ຜູ້ສະເໜີຄືນ ໝາຍເຖິງ** ຜູ້ແຈ້ງພາສີ ຫຼື ຜູ້ໄດ້ຮັບມອບສິດໃນການແຈ້ງພາສີ ທີ່ບໍ່ພໍໃຈຕໍ່ການຕັດສິນຂອງລັດຖະການພາສີ ກ່ຽວກັບມູນຄ່າແຈ້ງພາສີ, ເລກລະຫັດ ແລະ ແຫຼ່ງກໍາເນີດສິນຄ້າ, ເຄື່ອງຂອງ.

## ມາດຕາ 3 : ຂອບເຂດການນໍາໃຊ້

ຄໍາແນະນໍາສະບັບນີ້ ນໍາໃຊ້ສະເພາະການແກ້ໄຂຄໍາສະເໜີຄືນຂອງຜູ້ແຈ້ງພາສີ ທີ່ຍື່ນຕໍ່ຄະນະກໍາມະການແກ້ໄຂຄໍາສະເໜີໃນແຕ່ລະຂັ້ນ ກ່ຽວກັບມູນຄ່າແຈ້ງພາສີ, ເລກລະຫັດ ແລະ ແຫຼ່ງກໍາເນີດ ສິນຄ້າ, ເຄື່ອງຂອງ ຕາມກົດໝາຍ ແລະ ລະບຽບການກໍານົດ.

ເງື່ອນໄຂທີ່ກ່າວມາຂ້າງເທິງນີ້ ຈະບໍ່ຖືກປະຕິບັດ ໃນໄລຍະທີ່ຜູ້ແຈ້ງພາສີ ຖືກດໍາເນີນຄະດີທາງພາສີ ຫຼື ຢູ່ໃນຂັ້ນຕອນຂອງສານ.

## ມາດຕາ 4 : ຫຼັກການ ແກ້ໄຂຄໍາສະເໜີ

1. ປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍພາສີ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງກັບວຽກງານພາສີ;
2. ຮັບປະກັນຄວາມຖືກຕ້ອງ, ຍຸຕິທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້;
3. ຮັບປະກັນປະສິດທິຜົນ ອີງໃສ່ເອກະສານ ແລະ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງຕົວຈິງ;
4. ປະຕິບັດໃຫ້ຖືກຕ້ອງ ຕາມຂັ້ນຕອນ, ທັນກໍານົດເວລາ ແລະ ສອດຄ່ອງກັບລະບຽບການສາກົນ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ.

## ມາດຕາ 5 : ຂັ້ນຕອນໃນການພິຈາລະນາຄໍາສະເໜີຄືນ

- ການຍື່ນຄໍາສະເໜີຄືນ;
- ການກວດກາ ສິດໃນການສະເໜີຄືນ;
- ການພິຈາລະນາຄໍາສະເໜີຄືນ;
- ຄະນະກໍາມະການແກ້ໄຂຄໍາສະເໜີຄືນ ວິເຄາະ, ວິໄຈ ເອກະສານ ແລະ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ;
- ການແຈ້ງ ແລະ ເຜີຍແຜ່ ຄໍາຕັດສິນ.

## ມາດຕາ 6 : ການຍື່ນຄໍາສະເໜີຄືນ

ຜູ້ແຈ້ງພາສີ ທີ່ເຫັນວ່າຕົນບໍ່ໄດ້ຮັບຄວາມເປັນທໍາ ຕາມການຕັດສິນຂອງລັດຖະການພາສີ ກ່ຽວກັບມູນຄ່າແຈ້ງພາສີ, ເລກລະຫັດ ແລະ ແຫຼ່ງກໍາເນີດສິນຄ້າ, ເຄື່ອງຂອງ ສາມາດຍື່ນຄໍາສະເໜີຕາມແບບພິມທີ່ລັດຖະການພາສີກໍານົດ ແລະ ຕ້ອງໄດ້ຄັດຕິດຂໍ້ມູນ, ຫຼັກຖານ ແລະ ເອກະສານກ່ຽວຂ້ອງທີ່ເປັນການເຊື່ອຖືໄດ້ ຕໍ່ຄະນະກໍາມະການແກ້ໄຂຄໍາສະເໜີແຕ່ລະຂັ້ນ ເພື່ອດໍາເນີນການ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 68 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011.

## ມາດຕາ 7 : ສິດຂອງຜູ້ສະເໜີຄືນ

ຜູ້ແຈ້ງພາສີ ມີສິດສະເໜີຄືນ ດັ່ງນີ້ :

1. ຍື່ນຄຳສະເໜີ ຕໍ່ຄະນະກຳມະການແກ້ໄຂຄຳສະເໜີ ປະຈຳດ່ານພາສີສາກົນ;
2. ໃນກໍລະນີທີ່ຍັງບໍ່ພໍໃຈ ຕໍ່ຄຳຕົກລົງຂອງຄະນະກຳມະການແກ້ໄຂຄຳສະເໜີ ປະຈຳດ່ານພາສີສາກົນ ຜູ້ສະເໜີ ມີສິດຍື່ນຄຳສະເໜີຕໍ່ຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງ;
3. ໃນກໍລະນີທີ່ຍັງບໍ່ພໍໃຈ ຕໍ່ຄຳຕົກລົງຂອງຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງ ຜູ້ສະເໜີ ມີສິດຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນ;
4. ສະໜອງເອກະສານ ແລະ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ ໃຫ້ຄະນະກຳມະການແກ້ໄຂຄຳສະເໜີແຕ່ລະຂັ້ນ;
5. ສິດໃນການໄດ້ຮັບຄຳອະທິບາຍ ຊີ້ແຈງ, ເຫດຜົນ ໃນການຕົກລົງຂອງຄະນະກຳມະການແກ້ໄຂຄຳສະເໜີແຕ່ລະຂັ້ນ;
6. ເຂົ້າເຖິງຂໍ້ມູນຂ່າວສານຂອງລັດຖະການພາສີ ທີ່ກ່ຽວຂ້ອງກັບການສະເໜີຄືນ ສະເພາະມູນຄ່າແຈ້ງພາສີ, ເລກລະຫັດ ແລະ ແຫຼ່ງກຳເນີດ ສິນຄ້າ, ເຄື່ອງຂອງ.

## ມາດຕາ 8 : ຄວາມຮັບຜິດຊອບຂອງຜູ້ສະເໜີຄືນ

1. ຮັບຜິດຊອບຕໍ່ຄວາມຖືກຕ້ອງ, ຄົບຖ້ວນ ແລະ ຊັດເຈນ ຂອງເອກະສານ ແລະ ຂໍ້ມູນຫຼັກຖານກ່ຽວຂ້ອງກັບການສະເໜີຄືນ ໃນຮູບແບບທົ່ວໄປ ແລະ/ຫຼື ແບບເອເລັກໂຕຣນິກ. ໃນໄລຍະການຄົ້ນຄວ້າພິຈາລະນາຄຳສະເໜີຄືນ, ຖ້າມີການສະເໜີຂໍ້ມູນເພີ່ມເຕີມຈາກລັດຖະການພາສີແຕ່ລະຂັ້ນ, ຜູ້ສະເໜີຕ້ອງໃຫ້ຄວາມຮ່ວມມືສະໜອງຂໍ້ມູນຕາມກຳນົດເວລາ. ໃນກໍລະນີ ຜູ້ສະເໜີ ສະໜອງຂໍ້ມູນບໍ່ຄົບຖ້ວນ ຫຼື ບໍ່ສະໜອງຕາມກຳນົດເວລາ, ຄະນະກຳມະການແກ້ໄຂຄຳສະເໜີ ຈະພິຈາລະນາຕາມຂໍ້ມູນທີ່ມີຕົວຈິງ;
2. ໃນໄລຍະເວລາທີ່ມີການສະເໜີຄືນ ຫຼື ຢູ່ໃນຂັ້ນຕອນການແກ້ໄຂຄຳສະເໜີ, ຜູ້ສະເໜີ ຕ້ອງຈ່າຍຄ່າພາສີ-ອາກອນ ແລະ ພັນທະອື່ນຢ່າງຄົບຖ້ວນ ຫຼື ເຮັດການຄ້ຳປະກັນຕໍ່ລັດຖະການພາສີ ເພື່ອນຳເອົາສິນຄ້າ, ເຄື່ອງຂອງ ອອກຈາກດ່ານພາສີ ຫຼື ສາງ. ຜູ້ສະເໜີ ຕ້ອງຮັບຜິດຊອບປະຕິບັດທຸກເງື່ອນໄຂທາງດ້ານພາສີ ຈົນກວ່າຈະໄດ້ຮັບຄຳຕົກລົງຂອງຄະນະກຳມະການແກ້ໄຂຄຳສະເໜີ;
3. ການໃຫ້ຂໍ້ມູນບໍ່ຖືກຕ້ອງ ຫຼື ການປອມແປງຂໍ້ມູນ ຖືວ່າເປັນການກະທຳຜິດທາງພາສີ ແລະ ຈະຖືກດຳເນີນການສືບສວນ-ສອບສວນ ຕາມກົດໝາຍວ່າດ້ວຍພາສີ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
4. ປະຕິບັດ ສິດ ແລະ ໜ້າທີ່ຂອງຕົນ ກ່ຽວກັບການສະເໜີຄືນ ຕໍ່ລັດຖະການພາສີແຕ່ລະຂັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 9 : ຄະນະກຳມະການແກ້ໄຂຄຳສະເໜີຄືນ

ຄະນະກຳມະການແກ້ໄຂຄຳສະເໜີຖືກແຕ່ງຕັ້ງ ໂດຍລັດຖະມົນຕີກະຊວງການເງິນ ຊຶ່ງມີສອງຂັ້ນ ດັ່ງນີ້ :

1. ຄະນະກຳມະການແກ້ໄຂຄຳສະເໜີປະຈຳດ່ານພາສີສາກົນ ຊຶ່ງປະກອບດ້ວຍ ຫົວໜ້າດ່ານພາສີສາກົນ ເປັນປະທານ, ພະນັກງານຈາກພະແນກການເງິນແຂວງ, ນະຄອນ, ຂະແໜງການທີ່ກ່ຽວຂ້ອງ ແລະ/ຫຼື ຜູ້ຊ່ຽວຊານດ້ານພາສີ ບ່ອນດ່ານພາສີສາກົນ ຕັ້ງຢູ່ ເປັນຄະນະ;
2. ຄະນະກຳມະການແກ້ໄຂຄຳສະເໜີ ຂັ້ນສູນກາງ ຊຶ່ງປະກອບດ້ວຍ ຫົວໜ້າກົມພາສີ ເປັນປະທານ, ພະນັກງານຈາກກົມອື່ນຂອງກະຊວງການເງິນ, ກະຊວງທີ່ກ່ຽວຂ້ອງ ແລະ/ຫຼື ຜູ້ຊ່ຽວຊານດ້ານພາສີ ເປັນຄະນະ.

ຄະນະກຳມະການແກ້ໄຂຄຳສະເໜີຄືນ ທີ່ຖືກແຕ່ງຕັ້ງຕາມກົດໝາຍ ແລະ ລະບຽບການກຳນົດ ສາມາດແຕ່ງຕັ້ງອະນຸກຳມະການຊ່ວຍວຽກ ເພື່ອດຳເນີນຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງຄຳແນະນຳສະບັບນີ້.

## ມາດຕາ 10 : ການກວດກາສິດໃນການສະເໜີຄືນ

ຄະນະກຳມະການແກ້ໄຂຄຳສະເໜີຄືນແຕ່ລະຂັ້ນ ຕ້ອງໄດ້ກວດກາສິດຂອງຜູ້ສະເໜີ ໃຫ້ຖືກຕ້ອງ, ຄົບຖ້ວນ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ແລະ ລະບຽບການກຳນົດ.

## ມາດຕາ 11 : ສິດຂອງຄະນະກຳມະການແກ້ໄຂຄຳສະເໜີ

ເພື່ອຮັບປະກັນໃນການພິຈາລະນາແກ້ໄຂຄຳສະເໜີຄືນ ໃຫ້ຖືກຕ້ອງຕາມຫຼັກການ ຄະນະກຳມະການແກ້ໄຂຄຳສະເໜີຄືນໃນແຕ່ລະຂັ້ນ ມີສິດ ດັ່ງນີ້ :

1. ຄົ້ນຄວ້າ ແລະ ພິຈາລະນາຄຳສະເໜີຄືນ;
2. ສະເໜີແຕ່ງຕັ້ງອະນຸກຳມະການຊ່ວຍວຽກ;
3. ອອກໜັງສືແຈ້ງເຊີນ ຜູ້ສະເໜີຄືນ ຫຼື ບຸກຄົນທີ່ກ່ຽວຂ້ອງ ມາໃຫ້ຄຳອະທິບາຍ ຊີ້ແຈງ ຫຼື ສະໜອງເອກະສານທີ່ກ່ຽວຂ້ອງກັບການສະເໜີຄືນ;
4. ແຈ້ງໃຫ້ຜູ້ສະເໜີ ສົ່ງເອກະສານ ແລະ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງເພີ່ມເຕີມ ໃນກໍລະນີຈຳເປັນ;
5. ຈັດປະຊຸມ, ເຮັດບັນທຶກຄຳໃຫ້ການ ແລະ ບັນທຶກຄຳເຫັນຂອງຄະນະກຳມະການ;
6. ແຈ້ງຄຳຕົກລົງຂອງຄະນະກຳມະການແກ້ໄຂຄຳສະເໜີ ຕາມລະບຽບການກຳນົດ;
7. ຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງ ສາມາດເຊີນຄະນະກຳມະການແກ້ໄຂຄຳສະເໜີ ປະຈຳດ່ານພາສີສາກົນ ເຂົ້າຮ່ວມປະຊຸມ ເພື່ອຊີ້ແຈງລາຍລະອຽດ ກ່ຽວກັບການແກ້ໄຂຄັ້ງຜ່ານມາ ໃນກໍລະນີທີ່ຜູ້ສະເໜີ ຍັງບໍ່ພໍໃຈຕໍ່ຄຳຕົກລົງຂອງຄະນະກຳມະການແກ້ໄຂຄຳສະເໜີ ປະຈຳດ່ານພາສີສາກົນ;
8. ເຂົ້າຮ່ວມການພິຈາລະນາຄຳສະເໜີຄືນ ຢູ່ສານປະຊາຊົນ ຕາມການມອບໝາຍ.

## ມາດຕາ 12 : ການພິຈາລະນາຄຳສະເໜີຄືນ

ຄະນະກຳມະການແກ້ໄຂຄຳສະເໜີຄືນ ໃຫ້ດຳເນີນການ ດັ່ງນີ້ :

1. ການລວບລວມຂໍ້ມູນບັນດາເອກະສານທີ່ກ່ຽວຂ້ອງກັບການນຳເຂົ້າ :
   - ຫຼັກຖານຢັ້ງຢືນກ່ຽວກັບການນຳເຂົ້າຕົວຈິງ : ສັນຍາຊື້-ຂາຍ, ໃບສັ່ງຊື້ສິນຄ້າ, ໃບກຳກັບການຂົນສົ່ງ, ເອກະສານການແຈ້ງພາສີ, ເອກະສານທຸລະກຳທາງການເງິນ, ເອກະສານການບັນຊີ ແລະ ສິນຄ້າ, ເຄື່ອງຂອງຕົວຈິງ (ຖ້າມີ) ຫຼື ຕົວຢ່າງ ແລະ ອື່ນໆ;
   - ດຳເນີນການຄົ້ນຄວ້າມາດຕະການທາງກົດໝາຍ ແລະ ເຫດຜົນ ກ່ຽວກັບການປະເມີນມູນຄ່າແຈ້ງພາສີ, ເລກລະຫັດ ແລະ ແຫຼ່ງກຳເນີດ ສິນຄ້າ, ເຄື່ອງຂອງ ຂອງພະນັກງານ ແລະ ເຈົ້າໜ້າທີ່ພາສີ.
2. ຄະນະກຳມະການແກ້ໄຂຄຳສະເໜີ ສາມາດແຈ້ງເຊີນຜູ້ສະເໜີ ຫຼື ບຸກຄົນທີ່ກ່ຽວຂ້ອງ ມາໃຫ້ຄຳອະທິບາຍ ຊີ້ແຈງ ຫຼື ສົ່ງເອກະສານ ແລະ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງກັບຄຳສະເໜີຄືນ;
3. ບັນທຶກ ຄຳອະທິບາຍ ຊີ້ແຈງ ຂອງຜູ້ສະເໜີ ແລະ ຄະນະກຳມະການແກ້ໄຂຄຳສະເໜີ ຕໍ່ເອກະສານ ແລະ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ ຂອງຜູ້ສະເໜີຄືນ ພ້ອມທັງອະທິບາຍ ຊີ້ແຈງ ຄວາມບໍ່ພໍໃຈຕໍ່ຄຳຕົກລົງ ແລະ ເຫດຜົນ ຂອງຜູ້ສະເໜີຄືນ;
4. ລາຍງານ ກ່ຽວກັບຄຳຕົກລົງຂອງຄະນະກຳມະການແກ້ໄຂຄຳສະເໜີຄືນ ປະກອບມີ ຂໍ້ມູນອ້າງອີງ ແລະ ກົດໝາຍກ່ຽວຂ້ອງທີ່ມີຜົນບັງຄັບໃຊ້ ຕໍ່ຂັ້ນເທິງຖັດຄືນ.

## ມາດຕາ 13 : ຂັ້ນຕອນດຳເນີນວຽກງານຂອງຄະນະກຳມະການແກ້ໄຂຄຳສະເໜີແຕ່ລະຂັ້ນ

1. ປະທານຄະນະກຳມະການແກ້ໄຂຄຳສະເໜີແຕ່ລະຂັ້ນ ສະເໜີແຕ່ງຕັ້ງອະນຸກຳມະການຊ່ວຍວຽກ ພາຍໃນ ກຳນົດຫ້າ (5) ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຄຳສະເໜີເປັນຕົ້ນໄປ;
2. ຄະນະກຳມະການແກ້ໄຂຄຳສະເໜີແຕ່ລະຂັ້ນ ຈັດກອງປະຊຸມ, ຄົ້ນຄວ້າຄຳສະເໜີ, ດຳເນີນການແກ້ໄຂ ໂດຍອີງໃສ່ເອກະສານ ແລະ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ, ສະຫຼຸບລາຍງານ ແລະ ແຈ້ງຄຳຕົກລົງ ພາຍໃນ ກຳນົດສາມສິບ (30) ວັນ. ຄຳຕົກລົງ ແມ່ນຜົນການຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຄະນະກຳມະການ;
3. ອະນຸກຳມະການຊ່ວຍວຽກ ບັນທຶກເນື້ອໃນຄຳຕົກລົງ ແລະ ສົ່ງໃຫ້ປະທານຄະນະກຳມະການແກ້ໄຂຄຳສະເໜີໃນຂັ້ນຂອງຕົນ ຮັບຮອງພາຍໃນກຳນົດຫ້າ (5) ວັນລັດຖະການ ພາຍຫຼັງສຳເລັດການປະຊຸມ;
4. ແຈ້ງຄຳຕົກລົງ ໃຫ້ຜູ້ສະເໜີຢ່າງເປັນລາຍລັກອັກສອນ ໃຫ້ທັນເວລາ ຕາມລະບຽບການກຳນົດ;
5. ພາຍຫຼັງແຈ້ງຄຳຕົກລົງໃຫ້ຜູ້ສະເໜີ, ຄະນະກຳມະການແກ້ໄຂຄຳສະເໜີແຕ່ລະຂັ້ນ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ຂັ້ນເທິງຖັດຕົນ ພາຍໃນກຳນົດຫ້າ (5) ວັນລັດຖະການ. ຄຳຕົກລົງ ກ່ຽວກັບມູນຄ່າແຈ້ງພາສີ, ເລກລະຫັດ ແລະ ແຫຼ່ງກຳເນີດ ສິນຄ້າ, ເຄື່ອງຂອງ ອາດຈະເຜີຍແຜ່ໃຫ້ສັງຄົມຮັບຊາບ ຕາມແຕ່ລະກໍລະນີ ທີ່ເຫັນວ່າມີຄວາມຈຳເປັນ.

## ມາດຕາ 14 : ການແຈ້ງ ແລະ ເຜີຍແຜ່ ຄຳຕົກລົງ

1. ແຈ້ງຄຳຕົກລົງຢ່າງເປັນທາງການ ໃຫ້ຜູ້ສະເໜີຄືນ ໜຶ່ງສະບັບ, ຄະນະກຳມະການແກ້ໄຂຄຳສະເໜີ ໜຶ່ງສະບັບ ແລະ ສຳເນົາໜຶ່ງສະບັບ;
2. ຜູ້ສະເໜີຄືນ ທີ່ຍັງບໍ່ພໍໃຈຕໍ່ຄຳຕົກລົງ ມີສິດຍື່ນຄຳສະເໜີຕໍ່ສານປະຊາຊົນ, ຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງ ມີໜ້າທີ່ສະໜອງຂໍ້ມູນ ກ່ຽວກັບການຕົກລົງແກ້ໄຂຜ່ານມາ ໃຫ້ສານພິຈາລະນາ ແລະ ຄຳຕັດສິນຂອງສານປະຊາຊົນ ໃຫ້ຖືວ່າເປັນທີ່ສິ້ນສຸດ ແລະ ໃຊ້ໄດ້ຢ່າງເດັດຂາດ;
3. ເຜີຍແຜ່ຄຳຕົກລົງຂອງຄະນະກຳມະການແກ້ໄຂຄຳສະເໜີຄືນ ໃນຮູບແບບ ອິນທຣາເນັດ (Intranet) ແລະ ຮູບແບບ ອິນເຕີເນັດ (Internet).

## ມາດຕາ 15 : ການບັນທຶກ ແລະ ການເກັບຮັກສາເອກະສານ

1. ການປະກອບຄຳເຫັນຂອງຄະນະກຳມະການ ຕ້ອງໄດ້ມີການບັນທຶກເນື້ອໃນຢ່າງລະອຽດ, ຊັດເຈນ ຕໍ່ຄຳເຫັນຂອງກອງປະຊຸມ ຫຼື ຜູ້ຊ່ຽວຊານສະເພາະດ້ານຈາກພາຍນອກ ໂດຍອີງໃສ່ເອກະສານ ແລະ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ;
2. ປຶ້ມບັນທຶກການຄົ້ນຄວ້າອອກຄຳຕົກລົງຂອງ ຄະນະກຳມະການແກ້ໄຂຄຳສະເໜີແຕ່ລະຂັ້ນ ຕ້ອງໄດ້ເກັບສຳເນົາໄວ້ນຳລັດຖະການພາສີແຕ່ລະຂັ້ນທີ່ຮັບຜິດຊອບ ຫຼັງຈາກສຳເລັດການຄົ້ນຄວ້າອອກຄຳຕົກລົງ ພາຍໃນກຳນົດສາມ (3) ວັນລັດຖະການ;
3. ພາຍຫຼັງການອອກຄຳຕົກລົງ ຄະນະກຳມະການແກ້ໄຂຄຳສະເໜີແຕ່ລະຂັ້ນ ຕ້ອງເກັບຮັກສາເອກະສານ ແລະ ຂໍ້ມູນຫຼັກຖານອ້າງອີງທີ່ກ່ຽວຂ້ອງທັງໝົດ ໃນຮູບແບບທົ່ວໄປ ແລະ/ຫຼື ແບບເອເລັກໂຕຣນິກ ຢູ່ນຳລັດຖະການພາສີແຕ່ລະຂັ້ນທີ່ຮັບຜິດຊອບ;
4. ເອກະສານ ແລະ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ ໃນການອອກຄຳຕົກລົງ ຕ້ອງເກັບຮັກສາ ພາຍໃນກຳນົດເວລາສິບ (10) ປີ ນັບແຕ່ວັນອອກຄຳຕົກລົງເປັນຕົ້ນໄປ.

## ມາດຕາ 16 : ຄຳຕັດສິນຂອງຄະນະກຳມະການແກ້ໄຂຄຳສະເໜີແຕ່ລະຂັ້ນ

1. ຄຳຕັດສິນຂອງຄະນະກຳມະການແກ້ໄຂຄຳສະເໜີ ປະຈຳດ່ານພາສີສາກົນ ຕ້ອງຖືກຈັດຕັ້ງປະຕິບັດ ໂດຍພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນຜູ້ສະເໜີ. ໃນກໍລະນີທີ່ຜູ້ສະເໜີບໍ່ພໍໃຈຕໍ່ຄຳຕັດສິນຂອງຄະນະກຳມະການແກ້ໄຂຄຳສະເໜີ ປະຈຳດ່ານພາສີສາກົນ, ຜູ້ສະເໜີ ມີສິດສະເໜີຄືນ ເຖິງຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງ ພາຍໃນກຳນົດສິບຫ້າ (15) ວັນລັດຖະການ ນັບແຕ່ວັນ ໄດ້ຮັບຜົນການຕັດສິນຈາກຄະນະກຳມະການແກ້ໄຂຄຳສະເໜີ ປະຈຳດ່ານພາສີສາກົນ;
2. ຄະນະກຳມະການແກ້ໄຂຄຳສະເໜີ ປະຈຳດ່ານພາສີສາກົນ ແລະ ຂັ້ນສູນກາງ ແຈ້ງຄຳຕັດສິນໃຫ້ຜູ້ສະເໜີຮັບຊາບ ພ້ອມສົ່ງສຳເນົາໃຫ້ພາກສ່ວນທີ່ກ່ຽວຂ້ອງ ໃນຄະນະກຳມະການແກ້ໄຂຄຳສະເໜີ ເພື່ອຕິດຕາມການຈັດຕັ້ງປະຕິບັດ;
3. ຜູ້ສະເໜີ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງຈັດຕັ້ງປະຕິບັດຄຳຕັດສິນຂອງຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງ ພາຍໃນກຳນົດຫ້າ (5) ວັນລັດຖະການ;
4. ໃນກໍລະນີຜູ້ສະເໜີ ຍັງບໍ່ພໍໃຈຕໍ່ຄຳຕັດສິນຂອງຄະນະກຳມະການແກ້ໄຂຂັ້ນສູນກາງ ມີສິດຍື່ນຄຳສະເໜີຮ້ອງຟ້ອງຕໍ່ສານປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 70 ຂອງກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014 ໃນໄລຍະເວລາທີ່ລໍຖ້າຄຳຕັດສິນຂອງສານປະຊາຊົນ, ທຸກພາກສ່ວນທີ່ກ່ຽວຂ້ອງ ຕ້ອງປະຕິບັດຄຳຕັດສິນຂອງຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງ.

## ມາດຕາ 17 : ສິດໃນການຂໍຄຳເຫັນດ້ານເຕັກນິກຈາກຜູ້ຊ່ຽວຊານສະເພາະດ້ານ

1. ປະທານຄະນະກຳມະການແກ້ໄຂຄຳສະເໜີແຕ່ລະຂັ້ນ ມີສິດຂໍເອົາຜູ້ຊ່ຽວຊານສະເພາະດ້ານ ເຂົ້າມາອະທິບາຍ, ຊີ້ແຈງບັນຫາທີ່ກ່ຽວຂ້ອງທາງດ້ານວິຊາການ ເພື່ອໃຫ້ຄະນະກຳມະການແກ້ໄຂ ຄົ້ນຄວ້າພິຈາລະນາໃນການອອກຄຳຕັດສິນ, ຜູ້ຊ່ຽວຊານສະເພາະດ້ານ ມີໜ້າທີ່ສະເໜີຄຳເຫັນ ຫຼື ຄຳແນະນຳທາງດ້ານວິຊາການ ຢ່າງເປັນລາຍລັກອັກສອນ ຕໍ່ຄະນະກຳມະການ ແລະ ຮັບຜິດຊອບຕໍ່ຄຳເຫັນ ຫຼື ຄຳແນະນຳຂອງຕົນ;
2. ຜູ້ສະເໜີຄືນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຕົວຈິງທັງໝົດ ກ່ຽວກັບການມາເຮັດວຽກຂອງຜູ້ຊ່ຽວຊານ.

## ມາດຕາ 18 : ການຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນ

1. ພາຍຫຼັງໄດ້ຮັບຄຳຕັດສິນຈາກຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງ ຖ້າວ່າຜູ້ສະເໜີຫາກຍັງບໍ່ພໍໃຈຕໍ່ຄຳຕັດສິນດັ່ງກ່າວ ພາຍໃນກຳນົດສາມ (3) ວັນລັດຖະການ ຕ້ອງແຈ້ງໃຫ້ຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງຮັບຮູ້ ກ່ອນຈະດຳເນີນຂັ້ນຕອນຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນ;
2. ການຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນ ຕ້ອງໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ພ້ອມທັງມີເອກະສານ ແລະ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ ຄັດຕິດໄປພ້ອມ.

## ມາດຕາ 19 : ການຈັດຕັ້ງປະຕິບັດ

ມອບໃຫ້ກົມພາສີ ຈັດຕັ້ງຜັນຂະຫຍາຍ, ອອກລະບຽບການແນະນຳດ້ານວິຊາການ, ດຳເນີນການເຜີຍແຜ່, ເຊື່ອມຊຶມ ໃຫ້ພະນັກງານ, ເຈົ້າໜ້າທີ່ພາສີ ແລະ ຜູ້ແຈ້ງພາສີ ເພື່ອຮັບຮູ້ ແລະ ນຳໄປຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບເນື້ອໃນຂອງຄຳແນະນຳສະບັບນີ້.

ບັນດາກົມອ້ອມຂ້າງກະຊວງການເງິນ, ທຸກພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 20 : ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ.

ຮອງນາຍົກລັດຖະມົນຕີ

ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ